# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ 20 ທັນວາ 2009 (12-20-2009)

## ຈົ່ງໄປບອກຢູ່ເທິງພູສູງ

**ຂໍ້ພຣະຄັມພີໃນບົດຮຽນນີ້:** ລູກາ 1:67-79

**ຄຳຖາມຊີວິດ:** ທ່ານສາມາດຮັບເອົາການໃຫ້ອະພັຍຈາກຄວາມບາບ, ມີເສຣີພາບ ແລະຮັບໃຊ້ໂດຍທາງອົງພຣະເຢຊູຢ່າງມີປະສິດທິພາບແລະມີຄຸນຄ່າ.

**ພຣະຄັມພີແຫ່ງຄວາມຈິງ:** ບົດຮຽນນີ້ໄດ້ເວົ້າເຖິງຜູ້ປະກາດພຣະທັມ ຊາຂາຣີຢາໄດ້ມອງເຫັນແຜນການຂອງພຣະເຈົ້າໄດ້ສຳເຣັດລົງຄືປະທານຄວາມພົ້ນແກ່ຜູ້ທີ່ເຊື່ອເວລາອົງພຣະເມຊີອາໄດ້ສະເດັດມາ.

**ຜົນສະທ້ອນຕໍ່ຊີວິດ:** ຄົນອາວຸໂສທຸກຄົນຊອກສແວງຫາຄວາມໝາຍຂອງຊີວິດ. ໃນວັນຄຣິສມາດພວກເຂົາພາກັນຊອກຫາຄວາມໝາຍໂດຍການມອບແລະຮັບເອົາຂອງຂວັນ. ໃຫ້ພວກເຮົາພາກັນເຂົ້າໃຈວ່າຄວາມພົ້ນຈາກພຣະເຈົ້ານັ້ນແມ່ນຂອງຂວັນອັນປະເສີດເພື່ອແບ່ງປັນໃຫ້ກັບມະນຸດ.

ເວລາເດັກນ້ອຍໄດ້ສະແດງລະຄອນເຖິງວັນຄຣິສມາດພວກເຮົາພາກັນດີໃຈ. ຫລາຍໆເທື່ອພວກເດັກ ນ້ອຍໄດ້ພາກັນຮ້ອງເພງທີ່ມີຊື່ວ່າ, "ຈົ່ງໄປບອກຢູ່ເທິງພູສູງ" ເພງຄຣິສມາດນີ້ໄດ້ສລູບໃນຄືນວັນປະສູດຂອງອົງພຣະເຢຊູ ແລະປະກອບດ້ວຍຄຳເວົ້າເຫລົ່ານີ້: "ບ່ອນຕ່ຳໃນຄອກສັດ, ອົງພຣະຄຣິດຜູ້ຖ່ອມພຣະທັຍໄດ້ມາບັງເກີດ, ພຣະເຈົ້າໄດ້ປະທານຄວາມພົ້ນແກ່ພວກເຮົາ, ອວຍພຣະພອນວັນຄຣິສມາດຍາມເຊົ້າ." ຂໍ້ຊ້ຳໄດ້ເຕືອນຜູ້ເຊື່ອໃຫ້ອອກໄປບອກເຣື່ອງນີ້ເທິງພູສູງວ່າອົງພຣະເຢຊູໄດ້ສະເດັດມາບັງເກີດແລ້ວ!

### 1. **ພຣະເຈົ້າຊ່ວຍພວກເຮົາໃຫ້ພົ້ນຈາກຄວາມຜິດບາບ** (ລູກາ 1:67-71)

ເທວະດາຄັບຣິເອັນໄດ້ຖືກສົ່ງມາຈາກພຣະເຈົ້າໃຫ້ໄປບອກປະໂຣຫິດຊາຂາຣີຢາ ລູກາກ່າວວ່າພັລະຍາຂອງລາວຜູ້ມີຊື່ວ່າ ນາງເອລີຊາເບັດຕັ້ງຄັນມີລູກຜູ້ຊາຍ ລູກຂອງນາງຈະເປັນຜູ້ຈັດຕຽມປະຊາກອນຂອງພຣະເຈົ້າໃຫ້ຕ້ອນຮັບເອົາອົງພຣະເມຊີອານ. ໃນເມື່ອປະໂຣຫິດບໍ່ເຊື່ອຄຳເທວະດາຄັບຣິເອັນບອກນັ້ນ ລາວຢາກເຫັນສັນຍາລັກ. ເທວະດາບອກ ຊາຂາຣີຢາວ່າລາວຈະກາຍເປັນຄົນໃບ້ປາກບໍ່ອອກຈົນເຖິງລູກຊາຍນ້ອຍໄດ້ປະສູດມາ.

ໃນທີ່ສຸດນາງມາຣິອາກໍໄດ້ຕັ້ງທ້ອງແລະປະສູດລູກຊາຍ. ພວກຍາດຕິພີ່ນ້ອງໄດ້ມາສລອງຕາມປະເພນີໃນວັນທີແປດເພື່ອເຮັດພິທີຕັດແລະໃສ່ຊື່ເດັກເກີດໃໝ່ນັ້ນ. ນາງເອລີຊາເບັດໄດ້ບອກໃຫ້ຄົນໃສ່ຊື່ເດັກຄົນນັ້ນວ່າ ໂຢຮັນ.

**ເຂົາແຫ່ງຄວາມພົ້ນ**

ໃນ 2 ຊາມູເອນ 22:3, ກະສັດດາວິດ ໄດ້ບັນລະຍາຍເຖິງພຣະເຈົ້າວ່າ "ເຂົາແຫ່ງຄວາມພົ້ນຂອງຂ້າພະເຈົ້າ" ແມ່ນຜູ້ໃຊ້ເຂົາຊ່ອຍດ້ວຍຢ່າງມີພລັງ. ຕາມປົກກະຕິແລ້ວງົວເຖິກ ຫລືງົວປ່າມີເຂົາໃຫຍ່ໝາຍເຖິງກຳລັງ ອາດໝາຍຖືງສັນຍາລັກໃນຕົວ (ເວົ້າເຖິງພະລັງ; ພສສ. 75:4-5) ມີກຽດ ຄືນັບຖື (ພສສ 112:9). ໃນລູກາ 1:69, ກ່າວວ່າພຣະເຈົ້າ "ໄດ້

ຍົກເຂົາແຫ່ງຄວາມພົ້ນ" ໃນຖານະທີ່ອົງພຣະເມຊີອາໄດ້ໃຊ້ອຳນາດເພື່ອປົກປ່ອຍປະຊາກອນຂອງພຣະອົງໃຫ້ພົ້ນຈາກຄວາມບາບ.

ປະໂຣຫິດ ຊາຂາຣີຢາ ໄດ້ເຫັນດີກັບນາງເອລີຊາເບັດເຖິງແມ່ນໄດ້ກາຍເປັນປາກບໍ່ອອກ ແຕ່ລາວກໍໄດ້ສັຣເສີນພຣະເຈົ້າ ເພາະຄຳສັນຍາຂອງພຣະອົງໄດ້ກາຍເປັນຈິງເພື່ອຈະປະທານຄວາມພົ້ນໃຫ້ແກ່ມະນຸດ. ເພງທຳນວາຍຂອງລາວຮ້ອງວ່າ ເພງປິດທ້າຍ ເປັນຄວາມໝາຍວ່າ "ມີຄວາມສຸກຫລືອວຍພອນໃຫ້" ເປັນຄວາມເວົ້າທຳອິດໃນພາສາລາຕິນໃນເພງສັຣເສີນຂອງ ຊາຂາຣີຢາ. ເນື້ອໃນຂອງເພງນັ້ນໄດ້ເຕືອນພວກເຮົາໃຫ້ຮູ້ວ່າພຣະເຈົ້າໄດ້ປະທານຄວາມພົ້ນໃນທາງອົງພຣະເຢຊູ ແລະອະພັຍຄວາມຜິດບາບພ້ອມທັງເຮັດໃຫ້ພວກເຮົາຄືນດີກັບພຣະເຈົ້າໄດ້ ເມື່ອເປັນດັ່ງນັ້ນ, ພຣະເຈົ້າຕ້ອງການໃຫ້ເຮົາຮັບໃຊ້ແລະສ້າງສັນຕິສຸກທີ່ໂລກຂາດຢູ່ເວລານີ້.

ຊາຂາຣີຢາ ໄດ້ສັຣເສີນ**ພຣະເຈົ້າຂອງພວກອິສຣາເອັນ** ເພາະພຣະອົງສະເດັດມາຫາ ແລະປະທານ**ການໄຖ່ບາບຕໍ່ປະຊາກອນຂອງພຣະອົງ.** ຜູ້ປະກາດພຣະທັມ-ປະໂຣຫິດໄດ້ກ່າວເຖິງອະນາຄົດໄດ້ເວົ້າເໝືອນດັ່ງຜູ້ຮັບໃຊ້ໃນສມັຍກ່ອນໄດ້ທຳນວາຍໄວ້ ແຕ່ຊາຂາຣີຢາໄດ້ໃຊ້ຮູບພາບເມື່ອເວົ້າເຖິງເຂົາຂອງຄວາມພົ້ນ...ໃນຜາສາດຂອງກະສັດດາວິດຜູ້ເປັນຂ້າທາດ. ເຂົານີ້ໄດ້ປະທານຄວາມພົ້ນໝາຍເຖິງຄວາມຍິ່ງໃຫຍ່ຂອງພຣະບຸດ, ພຣະເມຊີອາ, ພຣະເຢຊູໄທນາຊາເຣັດ.

ໃນເມື່ອຍັງບໍ່ທັນເຂົ້າໃຈດີເຖິງສະພາບທີ່ອົງພຣະເມຊີອານຈະປະທານໃຫ້, ແຕ່ຊາຂາຣີຢາໄດ້ເວົ້າເຖິງຄວາມຊ່ອຍເຫລືອໃນດ້ານຮ່າງກາຍຄືຮັບເສຣີຈາກພວກສັດຕຣູ. ໃນພຣະຄັມພີໃໝ່ ພວກເຮົາເຂົ້າໃຈເຖິງພຣະສັນຍາວ່າຈະໃຫ້ພົ້ນຈາກອຳນາດຂອງສັດຕຣູຄືມານຕົວໃຫຍ່ ແລະອຳນາດຂອງຄວາມບາບຊຶ່ງນຳໄປສູ່ຄວາມດ້ານວິນຍານຈິດ.

ເພາະດ້ວຍສິ່ງທີ່ອົງພຣະເມຊີອາໄດ້ເຮັດເພື່ອພວກເຮົາ, ຜູ້ທີ່ເຊື່ອທຸກຄົນຄວນຍົກຍ້ອງສັຣເສີນຄວາມຍິ່ງໃຫຍ່ທີ່ພຣະອົງປະທານຄວາມພົ້ນ. ພວກເຮົາສາມາດເພິ່ງພຣະອົງຄຣິດໃຫ້ຊ່ອຍພວກເຮົາໃຫ້ພົ້ນຈາກພະຍາມານແລະຕໍ່ສິ່ງທຳລາຍຊີວິດຂອງພວກເຮົາ. ໃຫ້ພວກເຮົາກ້າຫານແຕ່ດ້ວຍຄວາມຖ່ອມໃຈບອກຄົນອື່ນວ່າຄວາມພົ້ນນັ້ນມີຢູ່ໃນພຣະອົງຜູ້ດຽວ.

ຫລາຍປີຜ່ານໄປແລ້ວເວລາຂ້າພະເຈົ້າໄດ້ອອກໄປປະກາດໃນເມືອງ ເວໂກ, ຣັດ ເທັກຊັສ. ຂ້າພະເຈົ້າ ບອກຄົນໃຫ້ໄປພົບກັນໃນໂຮງໜັງເກົ່າແຫ່ງນຶ່ງ. ຫລັງຈາກຮ້ອງເພງພິເສດແລະເທສນາແລ້ວ ຂ້າພະເຈົ້າໄດ້ເຊີນຄົນໃຫ້ມາເຊື່ອໃນອົງພຣະເຢຊູ. ມີຄົນໜຸ່ມມາຮັບເຊື່ອ ຂ້າພະເຈົ້າໄດ້ບອກລາວວ່າ, "ເຈົ້າອາດບໍ່ຮູ້ສຶກແປກແຕກຕ່າງອັນໃດ ແຕ່ໃຫ້ຮູ້ແນ່ເທີ້ນວ່າມີການແຕກຕ່າງເກີດຂຶ້ນໃນຊີວິດຂອງເຈົ້າແລ້ວ." ຊາຍຄົນນັ້ນໄດ້ຕອບຢ່າງກ້າຫານວ່າ, "ໂອ ຂ້າພະເຈົ້າມີຄວາມຮູ້ສຶກແຕກຕ່າງຫລາຍ!" ຊີວິດຂອງລາວໄດ້ຮັບການປ່ຽນແປງຈາກອົງພຣະວິນຍານບໍຣິສຸດໃນຄືນນັ້ນ, ແລະແຕ່ນັ້ນມາຊີວິດຂອງລາວກໍບໍ່ເປັນເໝືອນເດີມ.

## 2. <u>**ພຣະເຈົ້າໄດ້ປະທານຄວາມພົ້ນໃຫ້ເພື່ອຮັບໃຊ້**</u> (ລູກາ 1:72-77)

ຄຶດເຖິງເພງທີ່ນາງມາຣີອາໄດ້ກ່າວນັ້ນ (ລກ 1:46-55). ປະໂຣຫິດຊາຂາຣີຢາໄດ້ກ່າວເຖິງກິຈການທີ່ພຣະເຈົ້າໄດ້ເຮັດໂດຍປະທານຄວາມລອດພົ້ນໂດຍສົ່ງອົງພຣະເມຊີອາມາໃນໂລກ ເພື່ອເຮັດໃຫ້**ພຣະສັນຍາອັນບໍຣິສຸດ**ຂອງພຣະເຈົ້າຕໍ່**ອັບຣາຮາມ**ສຳເຣັດ. ຊາຂາຣີຢາເຂົ້າໃຈວ່າການຊ່ອຍໃຫ້ພົ້ນນັ້ນປະກອບດ້ວຍການ**ຊ່ອຍໃຫ້ພົ້ນຈາກອຳນາດຂອງພວກສັດຕຣູທັງຫລາຍ** ແລະຈັດໃຫ້ມີໂອກາດຮັບໃຊ້ອົງພຣະຜູ້ເປັນເຈົ້າອີກ ໂດຍ**ບໍ່ຢ້ານກົວອັນໃດ ເພື່ອໃຫ້ມີຊີວິດບໍຣິສຸດ ມີສິນທັມຕໍ່ພຣະພັກຂອງພຣະເຈົ້າຕລອດວັນເວລາ.**

ສິດພິເສດຢ່າງນີ້ບໍ່ແມ່ນສະເພາະແຕ່ໂຢຮັນ ບັບຕິສໂຕເທົ່ານັ້ນ, ແຕ່ເພື່ອທຸກໆຄົນຜູ້ເຊື່ອ ແລະຮັບເອົາອົງພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນ. ຜູ້ທີ່ເຊື່ອນັ້ນຕ້ອງມີຊີວິດບໍຣິສຸດ ແລະໂຢຮັນ ບັບຕິສໂຕ ຜູ້ປະກາດຄົນສຳຄັນຍັງສັ່ງວ່າໃຫ້ປະກາດເຣື່ອງຄວາມພົ້ນນີ້ແກ່ທຸກໆຄົນບໍ່ໃຫ້ຍ້ານກົວອັນໃດທັງສິ້ນ.

**ສາສນາທູດ ໂລຕີ ມູນ ຍັງຮັບໃຊ້ຢູ່**

**"ຈົ່ງໄປບອກເຣື່ອງນີ້ເທິງພູສູງ"**

- $1 ຊື້ພຣະຄັມພີໃໝ່ໃຫ້ຜູ້ປູກກາເຟໃນປະເທດເວັນເນຊູເອລາເຂົາເຮັດວຽກຢູ່ໃນພູເຂົາ.
- $ 13 ຊື້ນ້ຳມັນໃຫ້ພວກສາສນາທູດຮັບໃຊ້ໃນປະເທດໄອສແລນ; $ 2,300 ເປັນຄ່າເຊົ່າບ້ານ ສອງຫ້ອງນອນ.
- $ 15 ຊື້ກາແຊດອັດຂໍ້ພຣະຄັມພີໃຫ້ຄົນເຜົ່າກີຊົວໃນປະເທດເອກົວດໍ.
- $ 50 ໄປຊື້ຟີມໃສ່ກ້ອງຖາຍຮູບເພື່ອໃຫ້ພວກສາສນາທູດເອົາໄປໃຊ້ເປັນເຄື່ອງມືປະກາດ.
- $ 150 ໄປເປັນຄ່າທຳນຽມຂໍອະນຸຍາດເຂົ້າປະເທດເພື່ອປະກາດໃນແມ່ນ້ຳອາມາຊອນ.

ພວກເຮົາຕ້ອງພະຍາຍາມສຸດຄວາມສາມາດເພື່ອຈະບອກຄົນອື່ນເຣື່ອງຄວາມພົ້ນແກ່ທຸກຄົນຜູ້ມີຄວາມເຊື່ອໃນອົງພຣະເຢຊູເຈົ້າ. ລູກາໄດ້ຈົດໄວ້ເຖິງຄຳເວົ້າໃນຂອງອົງພຣະເຢຊູວ່າ "ຈົ່ງຖິ້ມໃຈເກົ່າແລະເອົາໃຈໃໝ່ເພື່ອຄວາມຜິດບາບຈະຖືກອະພັຍໃຫ້" (ລກ 24 47). ອົງພຣະເຢຊູຍັງສັ່ງພວກສາວົກວ່າໃຫ້ອອກໄປປະກາດຈາກວັນນັ້ນຈົນເຖິງວັນນີ້. (ມັດທາຍ 28:18-20). ຍາມຄຣິສມາສເປັນໂອກາດດີທີ່ພວກເຮົາຈະແບ່ງປັນເຣື່ອງຂ່າວປະເສີດ. ຢ່າງນ້ອຍໃຫ້ສົ່ງໄປສຄາດ ຫລືຂອງຂວັນໃຫ້ຄົນໃດຄົນນຶ່ງ.

ອີກທາງນຶ່ງເພື່ອຈະແບ່ງປັນຂ່າວປະເສີດກັບຄົນອື່ນໃນໂລກນີ້ຄືອ້ອນວອນທຸກໆວັນເພື່ອພວກເຂົາ ແລະຖວາຍຊັບໃຫ້ກອງປະກາດຕ່າງປະເທດທີ່ມີຊື່ວ່າ ລໍຕີ ມູນໃນຍາມຄຣິສມາສ. ການຖວາຍນີ້ ໄດ້ອອກນາມຊື່ຂອງ ຊາລອດ ດີກ "ລໍຕີ" ມູນ (ເດືອນ 12, 1840-ເດືອນ 24, 1912). ແມ່ນຄະນະບັບຕິສພາກໃຕ້ໄດ້ອອກໄປປະກາດສົ່ງຊີວິດຂອງຕົນໃນປະເທດຈີນໄດ້ປະມານ 40 ປີ ຜ່ານມາແລ້ວ (1873-1912. ໂດຍການຍອມຮັບໃຊ້ຢ່າງເສັຽສະລະ ຜູ້ຍິງຄົນນີ້ໄດ້ປູທາງໃນການປະກາດເພື່ອພວກຄະນະບັບຕິສໃນປະເທດອະເມຣິກາ. ທ່ານສາມາດເອົາຕົວຢ່າງຂອງຜູ້ຍິງຄົນນີ້ ໃຫ້ຮັບໃຊ້ຢ່າງເອົາໃຈໃສ່ໂດຍບໍ່ຕ້ອງຄິດເສັຽດາຍ.

### 3. **<u>ພຣະເຈົ້າໄດ້ຊ່ວຍພວກເຮົາໃຫ້ພົ້ນເພື່ອສ້າງສັນຕິສຸກ</u>** (ລູກາ 1:78-79)

ຊາຂາຣີຢາໄດ້ກ່າວເຖິງເຫັ້ງກໍທີ່ພຣະເຈົ້າໄດ້ປະທານຄວາມພົ້ນໃຫ້ມະນຸດນັ້ນມາ**ຈາກຄວາມເມດຕາສົງສານຂອງພຣະອົງ** ເພາະດ້ວຍຄວາມຮັກອັນເລິກເຊິ່ງຂອງພຣະອົງເອງຕໍ່ມະນຸດ ພຣະອົງຈຶ່ງໄດ້ສົ່ງອົງພຣະເຢຊູຜູ້ເປັນພຣະບຸດອົງດຽວເຂົ້າມາໃນໂລກນີ້ເໝືອນເປັນ**ແສງອາຣຸນຍາມເຊົ້າ**ຈາກທາງເທິງມາ**ຫາພວກເຮົາ.**

ຜູ້ທີ່ເຊື່ອມທຸກຄົນໄດ້ຖືກສັ່ງໃຫ້ອອກໄປປະກາດໃຫ້ທຸກໆຄົນຮູ້ເຖິງຄວາມລອດພົ້ນ ແລະການອະພັຍຈາກຄວາມຜິດບາບຂອງພວກເຂົາ.

ອົງພຣະເຢຊູໄດ້ປະທານຄວາມພົ້ນໃຫ້**ຜູ້ຢູ່ໃນຄວາມມືດ** ແລະ**ເງົາແຫ່ງຄວາມຕາຍ.** ພຣະເຢຊູເວົ້າເຖິງ ເຣື່ອງນີ້ເວລາພຣະອົງໄດ້ສົນທະນາກັບ ນີໂກແດມ ວ່າພຣະເຈົ້າມີຄວາມຮັກຈຶ່ງປະທານ "ພຣະບຸດອົງດຽວຂອງພຣະອົງ" (ໂຢຮັນ

3:16) ເພື່ອຈະປະທານຊີວິດອັນຕລອດໄປເປັນນິດໃຫ້ທຸກຄົນຜູ້ທີ່ເຊື່ອ. ສ່ວນຜູ້ເຂົ້າມາຫາພຣະອົງຈະໄດ້ພົບກັບຄວາມຫວັງ ແລະສັນຕິສຸກຖ້າມກາງໂລກແຫ່ງອານິດຈັງນີ້. ພຣະເຢຊູຊົງເປັນຜູ້ລ້ຽງທີ່ດີ ແລະພຣະອົງຈະ**ນໍາພາບາດຍ່າງຂອງພວກເຮົາໄປໃນທາງແຫ່ງສັນຕິສຸກອັນແທ້ຈິງ.**

ສັນຕິສຸກນັ້ນພຣະເຈົ້າປະທານໃຫ້ຜ່ານທາງອົງພຣະເຢຊູຢ່າງນ້ອຍສອງວິທີທາງ. ນຶ່ງ, ຄຣິສຕຽນສາມາດປະສົບກັບສັນຕິສຸກຖ້າມກາງຄວາມລໍາບາກ ເພາະພວກເຮົາມີຄວາມສໍາພັນກັບພຣະເຈົ້າຜ່ານທາງອົງພຣະເຢຊູເຈົ້າ. ພຣະເຢຊູກ່າວວ່າ, "ສັນຕິສຸກເຮົາມອບໃຫ້ທ່ານນັ້ນບໍ່ເໝືອນໂລກໃຫ້, ຢ່າໃຫ້ໃຈຂອງທ່ານຫວຸ້ນວາຍໄປ ຫລືຢ້ານກົວ" (ໂຢຮັນ 14:27). ໃນເມື່ອພວກເຮົາໄວ້ວາງໃຈໃນພຣະອົງຢ່າງແທ້ຈິງ, "ສັນຕິສຸກແຫ່ງພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ" ຈະຮັກສາຈິດໃຈຂອງທ່ານໄວ້ໃນພຣະອົງ (ຟີລິບປອຍ 4:7).

ສອງ, ໃນເມື່ອພຣະຄຣິດໄດ້ນໍາພາບາດຍ່າງຂອງພວກເຮົາ ເປັນເຫດໃຫ້ພວກເຮົາມີຄວາມສາມາດແບ່ງປັນແສງສວ່າງແລະສັນຕິສຸກ. ພວກເຮົາສາມາດຊ່ອຍສອນພວກເຂົາເຈົ້າໃຫ້ຮູ້ເຖິງຄວາມຈິງທີ່ມາຈາກແສງສວ່າງດ້ວຍພຣະຄໍາຂອງພຣະເຈົ້າ ແລະເປັນຕົວຢ່າງໃຫ້ພວກເຂົາໄດ້ເຫັນພາຍໃນຊີວິດຂອງພວກເຮົາ. ໃນເມື່ອພວກເຮົາເຮັດໃຫ້ຄົນອື່ນໄດ້ເຫັນສັນຕິສຸກທີ່ເກີດຂຶ້ນກັບຊີວິດຂອງພວກເຮົາແລ້ວ ພວກເຂົາອາດຈະສົນໃຈຢາກໄດ້ກັບສິ່ງທີ່ເຮົາມີ. ໃນທີ່ສຸດພວກເຮົາກໍສາມາດສັຣເສີນພຣະເຈົ້າທີ່ພຣະອົງຊົງເປັນບໍ່ເກີດແຫ່ງສັນຕິສຸກນັ້ນ.

## ບົດຮຽນໃນຊີວິດ

ເປັນຄວາມຈິງທີ່ທຸກຄົນຊອກສແວງຫາຄວາມໝາຍແຫ່ງຊີວິດ, ພວກເຂົາອາດບໍ່ຮູ້ສຶກຕົວເລີຍກໍອາດເປັນໄດ້. ພວກເຂົາອາດຊອກຫາໃນທາງມອບແລະຮັບຂອງຂວັນໃຫ້ກັນແລະກັນ. ຜູ້ທີ່ເຊື່ອມີຂອງຂວັນທີ່ດີທີ່ສຸດຄວນຈະແບ່ງປັນກັບຄົນເຫລົ່ານັ້ນເຖິງເຣື່ອງຄວາມພົ້ນ. ຊາຂາຣີຢາໄດ້ຮ້ອງເພງຖວາຍທີ່ໄດ້ເຕືອນພວກເຮົາໃນເຣື່ອງອັນຍິ່ງໃຫຍ່. ພວກເຮົາສາມາດຮຽນຮູ້:

- ໂດຍທາງອົງພຣະເຢຊູຜູ້ເປັນອົງພຣະເມຊີອາ, ພຣະເຈົ້າໄດ້ປະທານຂອງຂວັນອັນປະເສີດໃນເຣື່ອງຂ່າວປະເສີດທີ່ປະກອບດ້ວຍການອະພັຍໂທດຈາກບາບ, ເສຣີພາບຈາກຄວາມບາບ, ແລະເຂົ້າຮ່ວມຮັບໃຊ້ຊຶ່ງມີຄຸນຄ່າສູງ.
- ຜູ້ຄົນທີ່ຮັບເອົາອົງພຣະຄຣິດສາມາດສັຣເສີນພຣະເຈົ້າ ແລະຮັບເອົາການຊ່ອຍເຫລືອໃຫ້ມີຊີວິດຢ່າງມີຊັຍນະນະໂດຍບໍ່ຢ້ານອັນໃດ.
- ທຸກຄົນທີ່ເຊື່ອສາມາດປະສົບການກັບສັນຕິສຸກອັນແທ້ຈິງກັບຄົນອື່ນໂດຍການນໍາພາພວກເຂົາເຂົ້າມາຫາອົງພຣະເຢຊູ ຜູ້ເປັນເຈົ້າຂອງສັນຕິສຸກນັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.**